# ບົດຂ່າວ

## ສຳມະນາ ວຽກງານສົ່ງເສີມ ແລະ ໂຄສະນາການຕະຫຼາດ ຂອງສາຂາ

## ວັນທີ 07/12/2017 ທີ່ ໂຮງແຮມລ້ານຊ້າງ

ໃນວັນພະຫັດ ວັນທີ 07/12/2017 ທີ່ ໂຮງແຮມລ້ານຊ້າງ, ເວລາ 8:00-16:00 ໄດ້ຈັດງານສຳມະນາວຽກງານສົ່ງເສີມ ແລະໂຄສະນາການຕະຫຼາດ ຂອງ ສາຂາ, ໂດຍການເປັນປະທານຂອງ **ທ່ານ ພູຂຽງ ຈັນທະຈັກ,** ຜູ້ອຳນວຍການໃຫຍ່ ທຄຕລ ພ້ອມດ້ວຍການເຂົ້າຮ່ວມຂອງຄະນະພະແນກ, ສູນ, ຕ່າງໜ້າບັນດາສາຂາ ທຄຕລ ທົ່ວລະບົບ ແລະ ພະນັກງານວິຊາການຜູ້ຮັບຜິດຊອບວຽກງານການຕະຫຼາດເຂົ້າຮ່ວມຢ່າງພ້ອມພຽງຮຽງໜ້າ. ມີຜູ້ເຂົ້າຮ່ວມທັງໝົດ **70**ທ່ານ, ຕົວແທນຈາກສາຂາ **37** ທ່ານ.




**ທ່ານ ພູຂຽງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ກ່າວໃນພິທີວ່າ:** ໃນການສຳມະນາຄັ້ງນີ້ ທາງຄະນະຮັບຜິດຊອບກໍ່ຄື ສູນບັດ ແລະ ຂະແໜງການຕະຫຼາດ ພະແນກຄົ້ນຄວ້າ-ພັດທະນາ ກໍ່ຈະໄດ້ແນະນຳກ່ຽວກັບພາບລວມ ແລະ ການນຳໃຊ້ລະບົບເກັບຄ່າທຳນຽມທາງ, ເຊິ່ງຜະລິດຕະພັນດັ່ງກ່າວກໍ່ໄດ້ເປີດ ໃຫ້ບໍລິການໃນຂອບເຂດທົ່ວລະບົບມາໄດ້ໄລຍະໜຶ່ງແລ້ວ, ຜ່ານການໃຫ້ບໍລິການຜ່ານມາ ຖ້າສາຂາໃດຫາກພົບບັນຫາ ຫຍຸ້ງຍາກ ຫຼື ມີບັນຫາ ຂ້ອງໃຈກໍ່ໃຫ້ນຳສະເໜີເພື່ອເປັນການປຶກສາຫາລືຖອດຖອນບົດຮຽນ ຫາວິທີແກ້ໄຂນຳກັນ.

ນອກນັ້ນ ກໍ່ຈະມີການສຳມະນາ ທຳຄວາມຮູ້ຈັກ, ວິທີການນຳໃຊ້, ການຕິດຕັ້ງ ແລະ ການລະດົມຮ້ານຄ້າຕ່າງໆ ໃຫ້ຕິດຕັ້ງລະບົບ OnePay ຫຼືການຊຳລະຜ່ານ QR Code ຂອງ ທຄຕລ ເຊິ່ງຖືວ່າເປັນຜະລິດຕະພັນໃໝ່ລ້າສຸດ ຂອງ ທຄຕລ ທີ່ອອກມາຮັບໃຊ້ສັງຄົມ ແລະ ໄດ້ທົດລອງນຳໃຊ້ແລ້ວໃນນະຄອນຫຼວງວຽງຈັນ. ການຊຳລະສິນຄ້າຜ່ານ QR Code ຖືເປັນຜະລິດຕະພັນທີ່ກຳລັງໄດ້ຮັບຄວາມນິຍົມ ແລະ ແຜ່ຫຼາຍໃນຕ່າງປະເທດ ເປັນຜະລິດຕະພັນເພື່ອຊຸກຍູ້ນະໂຍບາຍ ລຸດຜ່ອນການນຳໃຊ້ເງິນສົດ, ສ້າງຄວາມສະດວກສະບາຍໃຫ້ລູກຄ້າ ກໍ່ຄືຮ້ານຄ້າ ແລະ ທັງເປັນຮູບແບບການລະດົມທຶນ ໜຶ່ງຂອງ ທຄຕລ ເຊັ່ນກັນ.













ການສຳມະນາ ວຽກງານສົ່ງເສີມ ແລະ ໂຄສະນາການຕະຫຼາດຂອງສາຂາ ໃນຄັ້ງນີ້ ແມ່ນເຫັນວ່າຜູ້ເຂົ້າຮ່ວມໄດ້ມີຄວາມເອົາໃຈໃສ່ຕໍ່ກັບການຖາມ-ຕອບບັນຫາໄດ້ເປັນຢ່າງດີ ແລະ ສາມາດລຸລ່ວງວຽກງານສຳມະນາໃຫ້ສຳເລັດຢ່າງຈົບງາມ. ນອກຈາກນີ້, ຍັງສາມາດຖອດຖອນບົດຮຽນ ເພື່ອເປັນແນວທາງໃນການສຳມະນາຄັ້ງຕໍ່ໄປ.

**ຂ່າວໂດຍ: ຂະແໜງສົ່ງເສີມຜະລິດຕະພັນ ແລະ ການຕະຫຼາດ**

**ສອບຖາມຂໍ້ມູນເພີ່ມເຕີມໂທ: 021 213200 ຕໍ່ 404/407**

**Facebook Fan Page: BCEL Bank**

**Website: www.bcel.com.la**